ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====----

ທະນາຄານ ແຫ່ງ ສປປ ລາວ

ສຳນັກງານ ຄຄຊ

ເລກທີ 1429 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 20 NOV 2014

**ເຖິງ:** ບັນດາພະນັກງານໃນສຳນັກງານ ຄຄຊ.

**ເລື່ອງ:** ການຂຽນບົດຈົບຊັ້ນລະດັບປະລິນຍາໂທຂຶ້ນໄປ ຂອງພະນັກງານສຳນັກງານ ຄຄຊ ທີ່ຮຽນຢູ່ພາຍໃນ ແລະ ຕ່າງປະເທດ.

- ອີງຕາມແຈ້ງການຈາກກົມຈັດຕັ້ງ ແລະ ພະນັກງານ ເລກທີ 319/ກຈພ ລົງວັນທີ 13 ພະຈິກ 2014.

ສຳນັກງານ ຄຄຊ ຂໍແຈ້ງມາຍັງບັນດາພະນັກງານພາຍໃນສຳນັກງານ ຄຄຊ ຊາບວ່າ: ສຳລັບພະນັກງານສຳນັກງານ ຄຄຊ ທີ່ກຳລັງສຶກສາໃນລະດັບປະລິນຍາໂທຂຶ້ນໄປ ຢູ່ພາຍໃນ ແລະ ຕ່າງປະເທດ ກ່ອນຈະຂຽນບົດຈົບຊັ້ນລະດັບປະລິນຍາໂທຂຶ້ນໄປ ໃຫ້ລາຍງານ ແລະ ປຶກສາຫາລືນຳຄະນະສຳນັກງານ ຄຄຊ ກ່ອນ ຫຼັງຈາກນັ້ນສິ່ງຫົວຂໍ້ທີ່ຕົນຈະຄົ້ນຄວ້າລົງເລິກຂຽນບົດຈົບຊັ້ນ ຢ່າງໜ້ອຍ 3 ຫົວຂໍ້ ໂດຍຈັດລຽງບູລິມະສິດຕາມລຳດັບໃຫ້ກົມຈັດຕັ້ງ ແລະ ພະນັກງານ ພິຈາລະນາຫົວຂໍ້ດັ່ງກ່າວຕື່ມ ວ່າຕິດພັນກັບວຽກທີ່ຕົນຮັບຜິດຊອບ ຫຼື ທຫລ ມີຄວາມຕ້ອງການ ຫຼື ບໍ່ ທັງນີ້ກໍ່ເພື່ອຄວາມເປັນເອກະພາບ ແລະ ຮັບປະກັນການຂຽນບົດດັ່ງກ່າວສອດຄ່ອງ ແລະ ຕິດພັນກັບໜ້າວຽກທີ່ຕົນຮັບຜິດຊອບ ພ້ອມທັງສາມາດນຳມາໝູນໃຊ້ເຂົ້າໃນວຽກງານຕົວຈິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພະນັກງານສຳນັກງານ ຄຄຊ ທີ່ກຳລັງສຶກສາລະດັບປະລິນຍາໂທຂຶ້ນໄປ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າສຳນັກງານ ຄຄຊ**

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄຄຊ

ວັດທະນາ ດາລາລອຍ